ບົດລາຍງານ

ການດຳເນີນທຸລະກິດ 6 ເດືອນຕົ້ນປີ 2024

ສິ້ນສຸດວັນທີ 30 ມິຖຸນາ 2024

ວິໄສທັດ/ Vision


ເປັນບໍລິສັດຊັ້ນນຳ ທາງດ້ານພະລັງງານເຊື້ອໄຟ ທີ່ຄົບວົງຈອນດ້ານຜະລິດຕະພັນປິໂຕຣລ້ຽມ ໃນສປປ ລາວ ແລະ ເຊື່ອມໂຍງການຄ້າໃນລະດັບອາຊຽນ ພາຍໃນ 5 ປີ.

Be a leader of Petroleum business in Lao PDR andlink the commcercial with ASEAN within 5 years.

ພາລະກິດ / Mission

ສ້າງທຸລະກິດພະລັງງານເຊື້ອໄຟຂອງເອກະຊົນລາວທີ່ຄົບວົງຈອນເປັນທີ່ຍອມຮັບແລະເຊື່ອໝັ້ນຂອງສັງຄົມ ສາມາດເຊື່ອມໂຍງການຄ້າໃນລະດັບພູມມິພາກ, ສ້າງ ແລະ ແບ່ງປັນຜົນປະໂຫຍດຕໍ່ຜູ້ທີ່ມີສ່ວນກ່ຽວພັນ ແລະ ສັງຄົມ.

Create Lao private sector's petroleum business fully integration with accpepted and confidence for the end users, linked commercial in the region, create and sharing profitibilities of those involved and to the societies.



ຂໍ້ມູນທົ່ວໄປກ່ຽວກັບບໍລິສັດ

ສັນຍາລັກ	:	PTL ຫຼື ປທລ ຫຼື PetroTrade
ສຳນັກງານໃຫ່ຍ	:	ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ
ໃບທະບຽນວິສາຫະກິດ	:	ສະບັບເລກທີ 508/ຈທວ, ລົງວັນທີ 05 ທັນວາ 2014
ເລກປະຈຳຕົວຜູ້ເສຍອາກອນ	:	722101761-9-00
ທຶນຈົດທະບຽນ	:	470,000,000,000 ກີບ
ຈຳນວນຮຸ້ນທັງໝົດ	:	235,000,000 ຮຸ້ນ
ເວັບໄຊ້	:	www.petrotradelaos.com
ໂທລະສັບ	:	(856) 21 264834-5
ໂທລະສານ	:	(856) 21 264836







ປະຫວັດຄວາມເປັນມາຂອງ ປິໂຕຣເທຣດ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ (Petroleum Trading Lao PublicCompany) ຫຼື ທີ່ຮູ້ຈັກກັນໃນນາມ ປິໂຕຣເທຣດ ສ້າງຕັ້ງຂຶ້ນໂດຍ ທ່ານ ຈັນທອນ ສິດທິໄຊ ແລະ ພັນລະຍາຄືທ່ານ ນາງ ສະຫວັນທອງ ພິງສະຫວັນ ເຊິ່ງທັງສອງທ່ານລ້ວນແຕ່ເປັນນັກທຸລະກິດທີ່ມີຊື່ສຽງໃນ ສປປ ລາວແລະ ມີປະສົບການໃນການປະກອບທຸລະກິດທີ່ຫຼາກຫຼາຍເປັນຕົ້ນແມ່ນທຸລະກິດນຳເຂົ້າ ແລະ ສົ່ງອອກສິນຄ້າຫຼາຍປະເພດໃນ ສປປ ລາວ.

ທີ່ຜ່ານມາ ທັງສອງທ່ານໄດ້ມີໂອກາດເດີນທາງເພື່ອສຳຫຼວດພື້ນທີ່ໃນຕົວເມືອງຕ່າງໆທັງໃນເຂດຊຸມຊົນ ແລະ ເຂດຊົນນະບົດຫ່າງໄກສອກຫຼີກເກືອບທຸກພື້ນທີ່ໃນ ສປປ ລາວ ເຊິ່ງທ່ານໄດ້ເບິ່ງເຫັນຄວາມຫຍຸ້ງຍາກໃນການເຂົ້າເຖິງແຫຼ່ງພະລັງງານ ຫຼື ນ້ຳມັນໂດຍສະເພາະໃນເຂດພື້ນທີ່ຫ່າງໄກສອກຫຼີກ ແລະ ເຫັນວ່ານ້ຳມັນທີ່ຂາຍໃນເຂດດັ່ງກ່າວແມ່ນມີລາຄາແພງເກີນກວ່າລາຄາປົກກະຕິທີ່ລັດຖະບານກຳນົດ. ດ້ວຍເຫັນໄດ້ເຖິງຄວາມຕ້ອງການໃນການຊົມໃຊ້ນ້ຳມັນປະກອບກັບແນວໂນ້ມການພັດທະນາເສດຖະກິດຈາກພາກລັດຖະບານ ໂດຍຖືເອົານ້ຳມັນເຊື້ອເພີງເປັນຊັບພະຍາກອນພື້ນຖານທີ່ສຳຄັນໃນການປະກອບສ່ວນໃນການພັດທະນາເສດຖະກິດຂອງປະເທດ. ສະນັ້ນ, ທ່ານ ຈັນທອນ ຈຶ່ງມີແນວຄວາມຄິດໃນການທີ່ຈະສ້າງສະຖານີບໍລິການນ້ຳມັນທີ່ມີຄຸນນະພາບ ແລະ ລາຄາຍຸຕິທຳໃຫ້ແກ່ປະຊາຊົນໃນຂົງເຂດຫ່າງໄກ ແລະ ກະຈາຍທົ່ວ ສປປ ລາວ, ດ້ວຍເຫດຜົນທີ່ກ່າວມາຂ້າງເທິງນັ້ນ ຈຶ່ງເປັນຈຸດເລີ່ມຕົ້ນຂອງການສ້າງຕັ້ງບໍລິສັດຂຶ້ນໃນວັນທີ 6 ກຸມພາ 2008 ດ້ວຍທຶນຈົດທະບຽນເບື້ອງຕົ້ນ 28.80 ຕື້ກີບ ເພື່ອໃຫ້ບໍລິການນຳເຂົ້າ ແລະ ຈັດຈຳໜ່າຍນ້ຳມັນຜ່ານທາງສະຖານີບໍລິການນ້ຳມັນ, ໂຄງການກໍ່ສ້າງຕ່າງໆລວມໄປເຖິງໂຄງການກໍ່ສ້າງພື້ນຖານໂຄງລ່າງ ໂດຍມີສຳນັກງານໃຫຍ່ຕັ້ງຢູ່ບ້ານ ສຸນັນທາ, ເມືອງ ໄກສອນພົມວິຫານ, ແຂວງ ສະຫວັນນະເຂດ.


ບໍລິສັດໄດ້ນຳເຂົ້ານ້ຳມັນເຊື້ອໄຟຈາກໂຮງກັ່ນນ້ຳມັນທີ່ມີຊື່ສຽງ ແລະ ເປັນທີ່ຍອມຮັບໃນດ້ານຄຸນນະພາບໃນລະດັບສາກົນ ໂດຍນຳເຂົ້ານ້ຳມັນຈາກຜູ້ຜະລິດໃນປະເທດໄທ ເຊິ່ງປະກອບດ້ວຍ Chevron (Thailand) Limited (Chevron), ESSO (Thailand) Public Company Limited (ESSO), IRPC Public Company Limited(IRPC) ແລະ The Shell Company of Thailand Limited (Shell).

ປີ		ສະຫຼຸບຫຍໍ້ເຫດການທີ່ພົ້ນເດັ່ນ
ປີ 2008	:	➢ ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ຈຳກັດ ສ້າງຕັ້ງຂຶ້ນດ້ວຍທຶນຈົດທະບຽນ 28.80 ຕື້ກີບ ໂດຍທ່ານ ຈັນທອນ ສິດທິໄຊ ແລະ ທ່ານ ນາງ ສະຫວັນທອງ ພິງສະຫວັນ ຖືຮຸ້ນໃນສັດສ່ວນ 75 ສ່ວນຮ້ອຍ ແລະ 25 ສ່ວນຮ້ອຍຕາມລຳດັບ ໂດຍມີວັດຖຸປະສົງຫຼັກຄືການນຳເຂົ້າ ແລະ ຈັດຈຳໜ່າຍນ້ຳມັນເຊື້ອໄຟຜ່ານສະຖານີບໍລິການນ້ຳມັນໃນ ສປປ ລາວ.
ປີ 2009	:	➢ ສ້າງສະຖານີບໍລິການນ້ຳມັນທີ່ໄດ້ມາດຕະຖານແຫ່ງທຳອິດຂຶ້ນທີ່ ໂພນທັນຊື່ວ່າ ປ໊ຳນ້ຳມັນ ພລັສ 1 (Plus 1). ➢ ເປີດນຳໃຊ້ສາງນ້ຳມັນແຫ່ງທຳອິດ ທີ່ແຂວງສະຫວັນນະເຂດ ບໍລິມາດບັນຈຸ700,000 ລິດ.
ປີ 2010	:	➢ ໄດ້ຮັບການຮັບຮອງຄຸນະພາບມາດຕະຖານຈາກໜ່ວຍງານUKASໃນ 3 ດ້ານຄື: ISO 9001:2008 Quality Management System, ISO 14001:2004Environmental Management System, OHSAS 18001:2007Occupational Health and Safety Management Systems. ➢ ໄດ້ມີການເປີດໃຊ້ສາງນ້ຳມັນທີ່ວຽງຈັນ ບໍລິມາດບັນຈຸ 1,120,000 ລິດ ແລະ ສາງນ້ຳມັນ ເມືອງເງິນ, ແຂວງ ໄຊຍະບູລີ ບໍລິມາດບັນຈຸ 700,000 ລິດ.
ປີ 2011	:	➢ ບໍລິສັດໄດ້ມີການເພີ່ມທຶນຈົດທະບຽນເປັນ 75.60 ຕື້ກີບ ເພື່ອຮອງຮັບການເຕີບໂຕ ແລະ ການລົງທຶນໃນການຂະຫຍາຍສະຖານີບໍລິການນ້ຳມັນໃຫ້ຄອບຄຸມທຸກພື້ນທີ່ຂອງ ສປປ ລາວ. ➢ ມີການເປີດສະຖານີບໍລິການນ້ຳມັນໃນຮູບແບບ ພລັສ ໂກລ(GLD) ເປັນແຫ່ງທຳອິດຂຶ້ນທີ່ ນະຄອນຫຼວງວຽງຈັນ. ➢ ໄດ້ມີການເປີດໃຊ້ສາງນ້ຳມັນທີ່ເມືອງ ປາກຊັນ, ແຂວງ ບໍລິຄຳໄຊ ບໍລິມາດບັນຈຸ 350,000 ລິດ. ➢ ມີສ່ວນແບ່ງທາງການຕະຫຼາດເປັນອັນດັບ 2 ທາງດ້ານທຸລະກິດເຊື້ອໄຟໃນ ສປປ ລາວ.
ປີ 2012	:	➢ ບໍລິສັດມີການເປີດສະຖານີບໍລິການນ້ຳມັນໃນຮູບແບບ ພລັສ ແພ໊ລດຕິນຳ (PTN) ເປັນສະຖານນີບໍລິການນ້ຳມັນທຳອິດຂຶ້ນທີ່ນະຄອນຫຼວງວຽງຈັນ ແລະ ໃສ່ຊື່ວ່າ ພລັສ ສະຖານີບໍລິການນ້ຳມັນ ດອນກອຍທີ່ບ້ານ ດອນກອຍ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ. ➢ ສາມາດຮັກສາສ່ວນແບ່ງທາງການຕະຫຼາດອັນດັບ 2 ທາງດ້ານທຸລະກິດເຊື້ອໄຟໃນສປປ ລາວ. ➢ ນຳໃຊ້ເຕັກໂນໂລຊີ ແລະ ລະບົບໄອທີທີ່ທັນສະໄໝເຂົ້າໃນການພັດທະນາ, ຄຸ້ມຄອງບໍລິຫານວຽກງານຂາຍຜ່ານເຄື່ອງຮູດບັດ (Electronic Data Capture: EDC)ແລະ ການເກັບກຳຂໍ້ມູນຈາກສູນກາງໄປຫາບັນດາສາຂາໃນຂອບເຂດທົ່ວປະເທດດ້ວຍການສ້າງຊອບແວລະບົບບໍລິຫານຂໍ້ມູນແບບລວມສູນ ຫຼື ERP System. ➢ ມີການລົງທຶນສ້າງລະບົບການບໍລິຫານການຂາຍນ້ຳມັນຜ່ານບັດອີເລັກໂທຣນິກ ຫຼື ບັດເຕີມນ້ຳມັນແທນເງິນສົດ (Fleet Card) ເປັນຜູ້ທຳອິດໃນ ສປປ ລາວ ເຊິ່ງເປັນຜູ້ລິເລີ່ມນຳເອົາເຕັກໂນໂລຊີໃນການບໍລິຫານ ແລະ ຄວບຄຸມຕົ້ນທຶນຄ່າໃຊ້ຈ່າຍໃນການບໍລິຫານຂອງຫ້ວໜ່ວຍທຸລະກິດ ລວມເຖິງຍັງເປັນບັດທີ່ສາມາດໃຊ້ແທນເງິນສົດໃນການຊຳລະຄ່ານ້ຳມັນໃຫ້ຜູ້ມາໃຊ້ບໍລິການໃນສະຖານີບໍລິການນ້ຳມັນຂອງບໍລິສັດ.

ປີ 2013	:	➢ ບໍລິສັດເພີ່ມທຶນຈົດທະບຽນເປັນ 350.00 ຕື້ກີບ ເພື່ອຮອງຮັບການເຕີບໂຕຂອງບໍລິສັດ ແລະ ການຂະຫຍາຍການລົງທຶນເພື່ອເປັນຜູ້ໃຫ້ບໍລິການໃນອັນດັບຕົ້ນຂອງ ສປປ ລາວ ແລະ ເພື່ອຮອງຮັບການເຕີບໂຕຂອງຄວາມຕ້ອງການນ້ຳມັນໃນ ສປປ ລາວ ແລະ ການເປີດປະຊາຄົມເສດຖະກິດອາຊຽນ (ASEAN Economic Community: AEC). ➢ ໄດ້ຮັບການສືບຕໍ່ຮັບຮອງຄຸນະພາບມາດຕະຖານຈາກໜ່ວຍງານUKASໃນທັງ 3 ດ້ານຄື: ISO 9001:2008, ISO 14001:2004, OHSAS 18001:2007. ➢ ໄດ້ມີການປັບປຸງໂຄງສ້າງບໍລິສັດ ແລະ ບໍລິສັດທີ່ກ່ຽວພັນໃຫ້ຊັດເຈນ ເພື່ອຮອງຮັບການເຕີບໂຕໃນໄລຍະຍາວ. ➢ ຍັງຄົງຮັກສາສ່ວນແບ່ງການຕະຫຼາດເປັນອັນດັບ 2 ຂອງຜູ້ຈ□າໜ່າຍນ□ ້ຳມັນເຊື້ອໄຟໃນ ສປປ ລາວ.
ປີ 2014	:	➢ ບໍລິສັດໄດ້ເຂົ້າເປັນສະມາຊິກ ສະມາຄົມ ນ້ຳມັນເຊື້ອໄຟ ແລະ ອາຍແກັດລາວທີ່ຂຶ້ນກັບສະພາການຄ້າ ແລະ ອຸດສາຫະກຳລາວ. ➢ ອີງຕາມກອງປະຊຸມຜູ້ຖືຮຸ້ນສາມັນປະຈຳປີ 2014 ໃນວັນທີ 18 ມີຖຸນາ 2014 ມີມະຕິຕົກລົງທີ່ສຳຄັນ ດັ່ງນີ້: – ຫຼຸດມູນຄ່າທີ່ກຳນົດໄວ້ຕໍ່ຮຸ້ນຈາກເດີມ 350,000,000 ກີບ ເປັນ 2,000 ກີບຕໍ່ຮຸ້ນ ສົ່ງຜົນໃຫ້ຈຳນວນຮຸ້ນຂອງບໍລິສັດເພີ່ມຂຶ້ນຈາກ 1,000 ຮຸ້ນ ເປັນ 175,000,000 ຮຸ້ນ. – ໄດ້ມີການກະຈາຍຮຸ້ນຈາກຜູ້ຖືຮຸ້ນເດີມ 2 ຄົນ ມາເປັນ 9 ຄົນ ເພື່ອຮອງຮັບການສ້າງຕັ້ງ ແລະ ປ່ຽນສະຖານະພາບເປັນບໍລິສັດມະຫາຊົນ. ➢ ອີງຕາມກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2014 ໃນວັນທີ 9 ຕຸລາ 2014 ມີມະຕິຕົກລົງທີ່ສຳຄັນດັ່ງນີ້: – ອະນຸມັດການເພີ່ມທຶນຈົດທະບຽນເປັນ 470.00ຕື້ກີບ ໂດຍການອອກຮຸ້ນສາມັນເພີ່ມທຶນຈຳນວນ 60,000,000 ຮຸ້ນ ມູນຄ່າກ□ານົດ 2,000 ກີບຕໍ່ຮຸ້ນ ເພື່ອຮອງຮັບການສະເໜີຂາຍຮຸ້ນແກ່ມວນຊົນເປັນຄັ້ງທຳອິດ (IPO). – ສ້າງຕັ້ງບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ ແລະ ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວຢ່າງເປັນທາງການ ໃນວັນທີ 9 ທັນວາ 2014.
ປີ 2018	:	➢ ບໍລິສັດໄດ້ແຍກ 2 ພາກສ່ວນທຸລະກິດອອກເປັນ 2 ບໍລິສັດລູກ ເພື່ອໃຫ້ສອດຄ່ອງກັບລະບຽບກົດໝາຍໃໝ່ ຕາມດຳລັດ 331/ນຍ



ໂຄງຮ່າງການຈັດຕັ້ງ ປທລ





ສະພາຜູ້ອຳນວຍການຂອງ ປທລ



ທ່ານ ສິລາ ວຽງແກ້ວ
ປະທານສະພາບໍລິຫານ



ທ່ານ ຄຳສອນ ສິດທິໄຊ
ຮອງປະທານສະພາບໍລິຫານ



ທ່ານ ນາງ ແສງເດືອນ ກ້ຽວສຸວັດ
ສະມາຊິກສະພາບໍລິຫານ



ທ່ານ ມາກ ລູອັນ
ສະມາຊິກສະພາບໍລິຫານ



ທ່ານ ບຸນຖັນ ວົງສຸລີ
ສະມາຊິກສະພາບໍລິຫານອິດສະຫຼະ



ທ່ານ ວຽງຄອນ ສິດທິໄຊ
ສະມາຊິກສະພາບໍລິຫານອິດສະຫຼະ



ທ່ານ ດາວອນ ວົງວິຈິດ
ສະມາຊິກສະພາບໍລິຫານອິດສະຫຼະ

ການຂາຍ

ຕາຕະລາງຍອດຂາຍລູກຄ້າໂຄງການ ໃນ 6 ເດືອນຕົ້ນປີ 2024

No	ລູກຄ້າ/Costomer	ລິດ/Litre
1	ລູກຄ້າໂຄງການ/B2B	25,545,000

ຕາຕະລາງຍອດຂາຍລູກຄ້າພາຍໃນ 6 ເດືອນຕົ້ນປີ 2024

No	ລູກຄ້າ/Customer	ລິດ/Litre
1	Spot Wholesale	62,627,000

ຕາຕະລາງຍອດຂາຍລູກຄ້າປ້ຳນ້ຳມັນ ໃນ 6 ເດືອນຕົ້ນປີ 2024

No	ລູກຄ້າ/Costomer	ລິດ/Litre
COCO/ປ້ຳນ້ຳມັນຂອງບໍລິສັດ		
1	ປ້ຳນ້ຳມັນໂກລ/Gold	11,897,000
2	ປ້ຳນ້ຳມັນພລາຕິນາ/Platinum	5,386,000
3	ປ້ຳນ້ຳມັນມາດຕະຖານ/Standard	8,604,000
DODO/ປ້ຳນ້ຳມັນຂອງລູກຄ້າ		
1	ປ້ຳນ້ຳມັນໂກລ/Gold	4,536,000
2	ປ້ຳນ້ຳມັນພລາຕິນາ/Platinum	1,122,000
3	ປ້ຳນ້ຳມັນມາດຕະຖານ/Standard	6,415,0000
4	ປ້ຳນ້ຳມັນທ້ອງຖິ່ນພັດທະນາ/Thongthin	6,976,000
ລວມ/Total		**44,936,000**

ຕາຕະລາງຍອດຂາຍລູກຄ້າທັງໝົດ ໃນ 6 ເດືອນຕົ້ນປີ 2024

No	ລູກຄ້າ/Costomer	ລິດ/Litre
1	ລູກຄ້າໂຄງການ/B2B	25,545,000
2	ລູກຄ້າ Spot	62,627,000
3	ລູກຄ້າປ້ຳນ້ຳມັນ/Gas Station	44,936,000
4	ລູກຄ້ານ້ຳມັນເຄື່ອງ/Lubricant	-
	ລວມທັງໝົດ/Total	**133,108,000**

ຕາຕະລາງປຽບທຽບແຜນ ແລະ ຍອດຂາຍເຄິ່ງປີ 2023 - 2024

ຍອດຂາຍ 6 ເດືອນຕົ້ນປີ 2023	ຍອດຂາຍ 6 ເດືອນຕົ້ນປີ 2024	ສ່ວນຕ່າງສົມທຽບ 6 ເດືອນ ຕົ້ນປີ 2023-2024 (+, -, %)
106,368,000	**133,108,000**	**+20.09%**

ການບໍລິຫານສາງນ້ຳມັນ

ຮັບເຂົ້າສາງທັງໝົດ 71,926,559 ລິດ;
ຈ່າຍອອກສາງທັງໝົດ 71,802,627 ລິດ;

- ຄ່າສະເລ່ຍການລະເຫີຍຂອງນ້ຳມັນແອັດຊັງ 95 ໃນລະຫວ່າງການເກັບຮັກສາເທົ່າກັບ -1,205 ລິດ, ຂອງຍອດຮັບທັງໝົດ 446,321 ລິດ ຢູ່ໃນເກນຄວບຄຸມມາດຕະຖານໃນອັດຕາສະເລ່ຍ -0.29 ສ່ວນຮ້ອຍ;
- ຄ່າສະເລ່ຍການລະເຫີຍຂອງ ນ້ຳມັນແອັດຊັງ 91 ໃນລະຫວ່າງການເກັບຮັກສາເທົ່າກັບ -23,473 ລິດ, ຂອງ ຍອດຮັບທັງໝົດ 17,106,372 ລິດ ຢູ່ໃນເກນຄວບຄຸມມາດຕະຖານ ໃນອັດຕາສະເລ່ຍ -0.14 ສ່ວນຮ້ອຍ;
- ຄ່າສະເລ່ຍການລະເຫີຍຂອງ ນ້ຳມັນກາຊວນ ໃນລະຫວ່າງການເກັບຮັກສາເທົ່າກັບ -40,619 ລິດ ຂອງຍອດ ຮັບ ທັງໝົດ 54,373,866 ລິດ ຢູ່ໃນເກນຄວບຄຸມມາດຕະຖານ ໃນອັດຕາສະເລ່ຍ -0.07 ສ່ວນຮ້ອຍ.

ວຽກງານດ້ານບຸກຄະລາກອນ

ການດຳເນີນງານດ້ານບຸກຄະລາກອນໃນຊ່ວງ 6 ເດືອນຕົ້ນປີ 2024 ຜ່ານມາແມ່ນເນັ້ນໃສ່ການຮັບປະກັນຄວາມພຽງພໍຂອງພະນັກງານ, ການສັນຫາບຸກຄະລາກອນທີ່ເໝາະສົມເຂົ້າຕຳແໜ່ງທີ່ຫວ່າງຢ່າງມີປະສິດທິພາບ, ເປັ່ງແຍງສະຫວັດດີການຂອງພະນັກງານຕາມກົດລະບຽບພາຍໃນບໍລິສັດ ແລະ ຕາມກົດໝາຍແຮງງານວ່າງອອກ.

ນອກນີ້ກໍ່ຍັງໄດ້ຈັດໃຫ້ມີການຝຶກອົບຮົມໃນຫົວຂໍ້ຕ່າງໆ ເພື່ອເພີ່ມທັກສະ ແລະ ຄວາມຮັບຮູ້ຂອງພະນັກງານພາຍໃນອົງກອນດັ່ງນີ້:

- ການເຜີຍແຜ່ນະໂຍບາຍບໍລິສັດສຳລັບ ພະນັກງານໃໝ່;
- ຝຶກອົບຮົມໃນຫົວຂໍ້ຜູ້ປະກອບການມາດຕະຖານ AEO.

ຈຳນວນພະນັກງານ ປທລ 6 ເດືອນຕົ້ນປີ 2024

ຫ້ອງການ ແລະ ສາຂາ	ຍິງ	ຊາຍ	ສັນຍາຈ້າງ	ລວມ
ຈຳນວນພະນັກງານທັງໝົດ	56	68		124

ສະຫຼຸບການສະໜັບສະໜຸນຊ່ວຍເຫຼືອສັງຄົມ 6 ເດືອນຕົ້ນປີ 2023

ລດ	ເນື້ອໃນ	ມູນຄ່າ
1	ອຸປະຖຳໂຄງການທົດລອງໄຂ່ຕົ້ມ ໃຫ້ນັກຮຽນ ອະນຸບານ ທີ່ເມືອງລ້ອງຊານ	101,000,000.00
2	ຊຸກຍູ້ເຄື່ອງກິລາ ແຂວງບໍລິຄຳໄຊ	2,400,000.00
3	ສະໜັບສະໜູນ ຖ່າຍທອດສົດ ງານມະຫາກຳບຸນຊ້າງ ທີ່ແຂວງໄຊຍະບູລີ ປະຈຳປີ 2024	10,000,000.00
4	ຊຸກຍູ້ ປກສ ບ້ານ ປະຈຳເດືອນ 01/2024	450,000.00
5	ຄ່າຊຸກຍູ້ ອຸປະຖຳ ຫ້ອງການຕຳຫຼວດອັກຄີໄພ (ດັບເພີງ) ວັນທີ 18/12/2023	200,000.00
6	ຊ່ວບປ້ອງກັນຍາມເວນທ້າຍປີບ້ານນາບວບ	450,000.00
7	ສະໜັບສະໜູນນ້ຳມັນລົດກູ້ໄພ 123 ປະຈຳເດືອນ 01-06/2024	12,279,700.00
8	ສະໜັບສະໜູນນ້ຳມັນລົດກູ້ໄພ 124 ປະຈຳເດືອນ 01-06/2024	12,442,500.00
9	ສະໜັບສະໜູນນ້ຳມັນລົດກູ້ໄພ 125 ປະຈຳເດືອນ 01-06/2024	19,944,400.00
10	ຄ່າບຳລຸງຮັກສາ ວົງວຽນດອນໜູນ ປະຈຳເດືອນ 01-06/2024	41,092,320.00
11	ຄ່າຊຸກຍູ້ວຽກງານ ປກຊ - ປກສ ບ້ານ ໂພນປ່າເປົ້າ ປະຈຳເດືອນ 12/2023	150,000.00
12	ຊຸກຍູ້ກະຊວງ ອຸດສາຫະກຳ ແລະ ການຄ້າ+ ຊຸກຍູ້ກະຊວງການເງິນ+ ຊຸກຍູ້ ສນຍ	62,277,000.00
13	ສະໜັບສະໜຸນງານ The pianist vientiane chamber orchestra concert	62,409,000.00
14	ອຸປະຖຳໃນການຈັດງານມະຫະກຳບຸນງານຊ້າງຂອງແຂວງໄຊຍະບູລີ	1,500,000.00
15	ເບີກຄັນຮົ່ມເພື່ອໄປບໍລິຈາກເຄື່ອງຢູ່ວັງວຽງ ຈ/ນ 24ກ້ານ	3,672,000.00
16	ສະໜັບສະໜູນກອງປະຊຸມສະຫລຸບວຽກງານອຸດສາຫະກຳ ແລະ ການຄ້າ ປະຈຳປີ 2023-2024	120,000,000.00
17	ຂອງຂວັນງານສະຫລອງວັນສ້າງຕັ້ງກອງທັບ	1,000,000.00
18	ຊຸກຍູ້ ປກສ ບ້ານໂພນທັນ-ໂພນປ່າເປົ້າ ແລະ ບ້ານນາຄຳ	430,000.00
19	ຈ່າຍຄ່າ (ປຶ້ມເອກະສານສຶກສາອົບຮົ່ມຊາວໜຸ່ມ)	150,000.00
20	ຊຸກຍູ້ ພິທີສະເຫຼີມສະຫຼອງ ວັນສ້າງຕັ້ງກອງທັບປະຊາຊົນລາວ ເມືອງຍົມມະລາດ	200,000.00
21	ໃສ່ຊອງຮ່ວມບຸນກອງເຂົ້າ	300,000.00

22	ຊຸກຍູ້ ຫ້ອງການບ້ານໂພນທັນ, ໂພນປ່າເປົ້າ	600,000.00
23	ສະໜັບສະໜູນທຶນສ້າງຫໍລັກເມືອງປາກເຊ ແຂວງຈຳປາສັກ	2,000,000,000.00
24	ເປີກເງິນອຸປະຖຳມູນນິທິພາກລັດ	500,000,000.00
25	ຊຸກຍູ້ດ້ານງົບປະມານເພື່ອນຳໃຊ້ເຂົ້າໃນງານກິລາມິດຕະພາບບານເຕະ	5,000,000.00
26	ກອງປະຊຸມ LNCCI	2,000,000.00
27	ຊຸກຍູ້ພາກລັດ ງານເປີດເມືອງທ່ອງທ່ຽວ	300,000.00
28	ຄ່າຊຸກຍູ້ວຽກງານ ປກຊ - ປກສ ບ້ານ ໂພນປ່າເປົ້າ	500,000.00
29	ສະໜັບສະໜູນການຖ່າຍທອດສົດງານແຂ່ນໜ້າສັງຂານທີ່ແຂວງຫຼວງພະບາງ	10,000,000.00
30	ສະໜັບສະໜູນງົບປະມານປະກອບສວນພາກລັດປີໃຫ່ມລາວ 2024	2,500,000.00
31	ສະໜັບສະໜູນການສ້ອມແປງຫ້ອງການຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ	10,000,000.00
32	ຄ່າຊຸກຍູ້ດິນບ່ອກເພື່ອສ້າງຮ່ອງລະບາຍນ້ຳຂອງຫ້ອງການຄະນະບໍລິຫານງານຊາວໜຸ່ມເມືອງເງິນ	900,000.00
33	ຊຸກຍູ້ກິລາຂອງກອງບັນຊາການ ປກສ ເມືອງໂພນໂຮງ	2,100,000.00
34	ສະໜັບສະໜູນງານຜະລິດຕະພັນລາວ (made in laos) ງວດທີ 01	150,000,000.00
35	ຈ່າຍຄ່າຊຸກຍູ້ກອນຫລອນບ້ານໂພນທັນ	620,000.00
36	ຊຸກຍູ້ປະກອບສ່ວນໃນການແຂ່ນາງສັງຂານເມືອງວັງວຽງ	300,000.00
37	ຮ່ວມສະໜັບສະໜູນງານລ້ຽງເລືອກນາຍບ້ານເລົ່າຄຳຊຸດໃໝ່	400,000.00
38	ຊຸກຍູ້ງານບຸນປະເພນີສິ້ງທ້າຍປີເກົ່າຕ້ອນຮັບປີໃໝ່ລາວປີ2024 (ຫ້ອງວ່າການເມືອງ)	400,000.00
39	ຮ່ວມພິທີສະເຫຼີມສະຫລອງສິ້ງທ້າຍປີເກົ່າແລະຕ້ອນຮັບປີໃໝ່ຂອງຫ້ອງການບ້ານໂພນທັນ	1,000,000.00
40	ຄ່າຊຸກຍູ້ວຽກງານ ປກຊ - ປກສ ບ້ານ ໂພນປ່າເປົ້າ	400,000.00
41	ຮ່ວມເຮັດບຸນກັບມູນລະນິທິກູ້ໄພ 1624 ວັນທີ 04/05/2024	1,000,000.00
42	ອຸປະຖຳຂອງຂ້ອນເດັກນ້ອຍ ຂອງໂຄງການ ເສີມສ້າງຄວາມຮູ້ ດ້ານສຸກຂະພາບໃຫ້ກັບເຍົາວະຊົນ	2,800,000.00
43	ຊຸກຍູ້ກອງປະຊຸມໃຫ່ຍຂອງກຳມະບານອາຫານອຸດສາຫະກຳ ແລະ ການຄ້າ ແຂວງວຽງຈັນ	2,000,000.00
44	ສະໜັບສະໜູນຄ່າບັດນ້ຳມັນ+ຜະລິດບັດນ້ຳມັນໃຫ້ຄົນທີ່ເຂົ້າຮ່ວມບໍລິຈາກເລືອດ	17,250,000.00
45	ຊຸກຍູ້ປີ້ມກຳມະບານ	90,000.00
46	ຄ່າຊຸກຍູ້ວຽກງານ ປກຊ - ປກສ ບ້ານ ໂພນປ່າເປົ້າ	520,000.00
47	ສະໜັບສະໜຸນກອງປະຊຸ່ມໃຫຍ່ບ້ານສຳພັນນາ	500,000.00
48	ປະກອບສ່ວນຊື້ແອ ໃຫ້ຫ້ອງວ່າການປົກຄອງ ແຂວງສະຫວັນນະເຂດ	1,000,000.00
49	ຊຸກຍູ້ກອງປະຊຸມໃຫ່ຍຂອງໜ່ວຍພັກ ແລະ ສາມອົງການຈັດຕັ້ງມະຫາຊົນກົມທະບຽນວິສາຫະກິດ	1,000,000.00
50	ຊຸກຍູ້ພາກສ່ວນເຮັດທາງຢາງ ເພື່ອຢຽບທາງເຂົ້າ-ອອກປ້ຳ ປາກກະດິງ	2,000,000.00
51	ຊຸກຍູ້ ປກສ ບ້ານໂພນທັນ-ໂພນປ່າເປົ້າ ແລະ ບ້ານນາຄຳ	470,000.00
52	ຊຸກຍູ້ ສະຫລອງວັນສິ່ງແວດລ້ອມໂລກເມືອງ ໂພນໂຮງ	200,000.00
53	ສະໜັບສະໜູນກອງປະຊຸ່ມໃຫຍ່ ໜ່ວຍພັກ ກົມການຄ້າພາຍໃນ	400,000.00
54	ຊຸກຍູ້ໃຫ້ ຄະນະໜ່ວຍພັກອາຫານ ພະແນກອຸດສາຫະກຳແລະການຄ້າ ໜ່ວຍພັກການຄ້າພາຍໃນ	400,000.00
	ລວມ	**3,168,996,920.00**

ສະຫຼຸບການມອບພັນທະອາກອນ ແລະ ອື່ນໆ ເຂົ້າລັດ 6 ເດືອນຕົ້ນປີ 2024

ປະເພດອາກອນ ແລະ ຄ່າທຳນຽມ	ຈຳນວນເງິນ
ພາສີນຳເຂົ້າ	143,516,353,300
ອກຊ	85,342,974,057
ອມພ	177,942,725,094
ບູລະນະທາງ	67,535,000,000
ຄັງແຮ/ກອງທຶນນ້ຳມັນ	85,522,090,000
ຄຸນນະພາບ	4,545,625,000
ໃບແຈ້ງພາສີ	251,905,000
ຄ່າສານມາກເກ້	10,577,520,000
ອມພ ຈ່າຍເພີ້ມ ປະຈຳເດືອນ	26,485,159,976
ອມພ ຈ່າຍເພີ້ມໄລ່ລຽງ	-
ອາກອນກຳໄລ	-
ອາກອນເງິນເດືອນ	2,062,328,088
ລວມ:	**603,781,680,515**

**** ບົດລາຍງານທາງດ້ານບັນຊີ ແລະ ການເງິນ (ແຍກຕ່າງຫາກ)***

ຮອງປະທານສະພາບໍລິຫານ

ບໍລິສັດ ປິໂຕຣລຽມເພຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ຄຳສອນ ສິດທິໄຊ